# ການແລກປ່ຽນຄວາມຮູ້ ແລະ ປະສົບການດ້ານການພັດທະນາ ກັບ ເຈົ້າໜ້າທີ່ ແລະ ບໍລິສັດເອກະຊົນ ຈາກເກົາຫລີ ເພື່ອການຄຸ້ມຄອງຊັບພະຍາກອນນໍ້າທີ່ດີຂຶ້ນ

**ນະຄອນຫລວງວຽງຈັນ, ສປປ ລາວ, 12 ກຸມພາ 2018-** ຜູ້ຕາງໜ້າອາວຸໂສຈາກຄະນະກຳມະທິການແມ່ນ້ຳຂອງສາກົນ (ຄມສ) ໄດ້ແລກປ່ຽນຄວາມຮູ້ ແລະ ປະສົບການເພື່ອການຄຸ້ມຄອງຊັບພະຍາກອນນ້ຳທີ່ດີຂຶ້ນ ແລະ ສຶກສາໂອກາດໃນການຮ່ວມມືກັບເຈົ້າໜ້າທີ່ ແລະ ບໍລິສັດເອກະຊົນ ຈາກເກົາຫລີ ໃນໄລຍະການຢ້ຽມຢາມໜຶ່ງອາທິດຢູ່ທີ່ເມືອງຫລວງ ເຊອູນ ແລະ ແດຈິນ ຂອງເກົາຫລີ.

ການຢ້ຽມຢາມຄັ້ງນີ້, ແມ່ນເລີ່ມແຕ່ວັນທີ 29 ມັງກອນ ຫາ 2 ກຸມພາ, ມີຜູ້ຕາງໜ້າເຂົ້າຮ່ວມ ຈາກ ຄມສ 14 ທ່ານ ໄປຢ້ຽມຢາມບັນດາສະຖາບັນຕ່າງໆຂອງປະເທດເກົາຫລີ, ລວມມີ ພະລັງງານລົມ, ແຫລ່ງຜະລິດພະລັງງານແສງຕາເວັນ, ຫ້ອງການຄວບຄຸມໄພນ້ຳຖ້ວມ, ແລະ ເຂື່ອນໄຟຟ້າພະລັງງານນ້ຳ ທີ່ໄດ້ລວມເອົາລະບົບພະລັງງານແສງຕາເວັນທີ່ຢູ່ເທິງອ່າງເກັບນ້ຳ. ຢູ່ພາກສະໜາມ, ທັງຜູ້ຕາງໜ້າຈາກ ຄມສ ແລະ ເກົາຫລີ ໄດ້ມີການປຶກສາຫາລື ແລະ ແລກປ່ຽນຄຳຄິດເຫັນໃນຫລາຍໆຫົວຂໍ້ທີ່ສຳຄັນ, ລວມທັງການພັດທະນາເຂື່ອນໄຟຟ້າພະລັງງານນ້ຳ, ບັນຫາຄວາມປອດໄພທາງນ້ຳ, ການພະຍາກອນໄພນ້ຳຖ້ວມ ແລະ ການປ້ອງກັນ, ບັນຫາຂ້າມຜ່ານຊາຍແດນລະຫວ່າງເກົາຫລີໃຕ້ ແລະ ເກົາຫລີເໜືອ ແລະ ບັນດາທາງເລືອກກ່ຽວກັບພະລັງງານທົດແທນ ເປັນຕົ້ນແມ່ນ ພະລັງງານແສງຕາເວັນ.

ທ່ານ ຟາມ ຕວັນ ຟານ, ເຈົ້າໜ້າທີ່ອາວຸໂສ ຄມສ, ກ່າວວ່າ ທ່ານປະທັບໃຈຫລາຍຕໍ່ຫົວຄິດປະດິດສ້າງໃໝ່ໆກ່ຽວກັບວຽກງານຄຸ້ມຄອງໄພນ້ຳຖ້ວມ ແລະ ພະລັງງານທົດແທນ ຂອງ K-Water ແລະ ຫ້ອງການຄວບຄຸມໄພນ້ຳຖ້ວມຮັນ (Han River Flood Control Office) ທີ່ສາມາດພິຈາລະນານຳໃຊ້ໄດ້ໃນແມ່ນ້ຳຂອງ.

ທ່ານກ່າວຕື່ມ, "ບັນດາແຜ່ນພະລັງງານແສງຕາເວັນທີ່ລອຍຢູ່ເທິງອ່າງເກັບນ້ຳ ແມ່ນໜ້າສົນໃຈຫລາຍ. ນອກຈາກເຂື່ອນໄຟຟ້າພະລັງງານນ້ຳ, ພວກເຮົາຍັງຄຳນຶງເຖິງທຸກຮູບແບບຂອງພະລັງງານທົດແທນເພື່ອການພັດທະນາທີ່ຍືນຍົງໃນແມ່ນ້ຳຂອງ ແລະ ຊັບພະຍາກອນແມ່ນ້ຳຂອງ "

ການຢ້ຽມຢາມກໍ່ຍັງລວມເອົາການສຳມະນາດ້ານທຸລະກິດ ທີ່ຜູ້ແທນ ຄມສ ພົບກັບ ຜູ້ຕາງໜ້າຈາກລັດຖະບານ ແລະ ພາກສ່ວນເອກະຊົນຂອງເກົາຫລີ ຫລາຍກວ່າ 100 ທ່ານ. ລວມທັງ ອົງການສົ່ງເສີມ ການຄ້າ-ການລົງທຶນ ແລະ ບໍລິສັດຊຳຊູງ ເພື່ອປຶກສາຫາລືກ່ຽວກັບໂອກາດໃນການລົງທຶນໃນບັນດາປະເທດແມ່ນ້ຳຂອງ, ໂດຍສະເພາະໂຄງການຮ່ວມ ຄມສ ແລະ ໂຄງການທີ່ມີຄວາມສຳຄັນທົ່ວອ່າງລະດັບປະເທດ.

ໃນໄລຍະການສຳມະນາ, ຜູ້ຕາງໜ້າ ຄມສ ໄດ້ໂອ້ລົມກັບບັນດາຜູ້ເຂົ້າຮ່ວມກ່ຽວກັບສະພາບການປະຈຸບັນ ແລະ ບັນດາໂອກາດໃນການພັດທະນາ ແລະ ສິ່ງທ້າທາຍ ໃນຂະແໜງນ້ຳ ແລະ ຂະແໜງທີ່ກ່ຽວຂ້ອງໃນບັນດາສີ່ປະເທດສະມາຊິກ ແມ່ນ້ຳຂອງ ກຳປູເຈຍ, ລາວ, ໄທ ແລະ ຫວຽດນາມ. ພ້ອມດຽວກັນນັ້ນ ກໍ່ຍັງຮຽກຮ້ອງໃຫ້ມີການຮ່ວມມືຈາກເກົາຫລີໃຫ້ຫລາຍຂຶ້ນກວ່າເກົ່າ.

ທ່ານ ເຈົ້າໜ້າທີ່ອາວຸໂສ, ຟາມ ກ່າວວ່າ "ພວກເຮົາຖືໂອກາດນີ້ເຊື້ອເຊີນເກົາຫລີ ເພື່ອມາເປັນຄູ່ຮ່ວມງານກັບພວກເຮົາ, ໂດຍສະເພາະ ການຮ່ວມມື ພາກລັດ-ເອກະຊົນ ກ່ຽວກັບການພັດທະນາ ແລະ ຄຸ້ມຄອງຊັບພະຍາກອນນ້ຳທີ່ຍືນຍົງໃນພາກພື້ນຂອງພວກເຮົາ"

“ພວກເຮົາຍິນດີທີ່ຈະໃຫ້ການສະໜັບສະໜູນຕໍ່ ຄມສ ແລະ ບັນດາປະເທດສະມາຊິກ. ພວກເຮົາພ້ອມແລ້ວທີ່ຈະຮ່ວມມືກັບບັນດາພາກສ່ວນດັ່ງກ່າວ” ກ່າວໂດຍ ທ່ານ ປອ. Youngsun Koh, ສະຖາບັນພັດທະນາເກົາຫລີ (KDI), ເຈົ້າໜ້າທີ່ອາວຸໂສ ສູນພັດທະນາສາກົນ, ຕອບທ່ານເຈົ້າໜ້າທີ່ອາວຸໂສ, ຟາມ.

ການຢ້ຽມຢາມຄັ້ງນີ້ ແມ່ນພາກສ່ວນໜຶ່ງຂອງໂຄງການແບ່ງປັນຄວາມຮູ້ MRC-KDI ພາຍໃຕ້ການຮ່ວມມືເບື້ອງຕົ້ນ ແມ່ຂອງ-ເກົາຫລີ ທີ່ໄດ້ດຳເນີນການຜ່ານບົດບັນທຶກຄວາມເຂົ້າໃຈ ໃນກາງປີ 2017. ໂຄງການນີ້ ມີເປົ້າໝາຍເພື່ອສ້າງເສັ້ນທາງໃຫ້ສອງສະຖາບັນເພື່ອຮ່ວມມືກັນແບ່ງປັນຄວາມຮູ້ ແລະ ປະສົບການໃນຫລາຍຂົງເຂດກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳທີ່ກ່ຽວຂ້ອງ.

ທັງສອງສະຖາບັນ, ໂດຍຜ່ານບັນດາຊ່ຽວຊານ, ຈະຮ່ວມກັນສ້າງບົດລາຍງານສຸດທ້າຍໃນຊ່ວງທ້າຍຂອງໂຄງການທີ່ຈະປຶກສາຫາລືກ່ຽວກັບບັນດາສິ່ງທ້າທາຍ ແລະ ໂອກາດ ທີ່ແມ່ນ້ຳຂອງກຳລັງປະເຊີນໜ້າຢູ່ ລວມທັງຄວາມປອດໄພທາງນ້ຳ ແລະ ການຄຸ້ມຄອງອ່າງແມ່ນ້ຳຂອງແບບປະສົມປະສານ; ບັນດາສິ່ງທ້າທາຍ ແລະ ໂອກາດ ໃນການພັດທະນາເຂື່ອນໄຟຟ້າພະລັງງານນ້ຳແບບຍືນຍົງ, ການປະເມີນຜົນກະທົບດ້ານສິ່ງແວດລ້ອມຈາກການພັດທະນາເຂື່ອນໄຟຟ້າພະລັງງານ ນ້ຳ; ແລະ ທິດທາງໃນຕໍ່ໜ້າກ່ຽວກັບການພັດທະນາເຂື່ອນໄຟຟ້າພະລັງງານນ້ຳແບບຍືນຍົງ.